ຂໍ້ສະເໜີນະໂຍບາຍ

# ຂໍ້ສະເໜີທາງດ້ານນະໂຍບາຍ ສຳລັບຊາວກະສິກອນຂະໜາດນ້ອຍ ເພື່ອຫຼຸດຜ່ອນຄວາມສ່ຽງໃນການຜະລິດຜັກອິນຊີ



## ສັງລວມຫຍໍ້

ຜັກອິນຊີເປັນບູລິມັດສິດຂອງລັດຖະບານລາວ ໃນການພັດທະນາສີຂຽວ, ແບບຍືນຍົງ ແລະ ສະໜັບສະໜູນການຜະລິດກະສິກຳສະອາດ ເພື່ອ ຄ້ຳປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າ. ນອກຈາກນັ້ນ, ການຜະລິດຜັກອິນຊີ ເປັນກິດຈະກຳທີ່ສຳຄັນຂອງຄອບຄົວຊາວກະສິກອນຂະໜາດນ້ອຍ ໃນການຕອບສະໜອງທາງດ້ານອາຫານ ແລະ ລາຍຮັບ. ແຕ່ວ່າ, ມີຫຼາກຫຼາຍບັນຫາສິ່ງຜົນກະທົບຕໍ່ການຜະລິດຂອງຊາວກະສິກອນຂະໜາດນ້ອຍ ເປັນຕົ້ນ ການຕະຫຼາດ ພາຍໃນ ແລະຕ່າງປະເທດ, ສະພາບແວດລ້ອມທີ່ມີການປ່ຽນແປງ, ເງິນທຶນ ແລະ ຕົ້ນທຶນການຜະລິດ, ໂຄງລ່າງພື້ນຖານ, ຄວາມຮູ້ ແລະ ປະສົບການຂອງຊາວກະສິກອນ, ການຂໍໃບຢັ້ງຢືນກະສິກຳອິນຊີ, ບົດບາດຍິງຊາຍ ແລະ ເຕັກໂນໂລຊີການຜະລິດ. ຂໍສະເໜີທາງດ້ານນະໂຍບາຍໃນໄລຍະສັ້ນ ແລະ ໄລຍະຍາວໄດ້ຖືກບັນຈຸໃນບົດການຄົ້ນຄວ້າ ເພື່ອຊ່ວຍຊາວກະສິກອນຂະໜາດນ້ອຍຜູ້ທີ່ຜະລິດຜັກອິນຊີ.

ມິຖຸນາ 2016
ນະຄອນຫຼວງວຽງຈັນ, ສປປ ລາວ

## ຄວາມເປັນມາ

ສປປລາວ ເປັນປະເທດໜຶ່ງ ທີ່ຕັ້ງຢູ່ເຂດຕາເວັນອອກສຽງໃຕ້ມີເນື້ອທີ່ກວມເອົາ 236,800 km$^2$ ແລະມີຊາຍແດນຕິດກັບປະເທດ ຫວຽດນາມ, ໄທ, ກຳປູເຈຍ, ຈີນ ແລະມຽນມາ; ຖ້າທຽບໃສ່ປະເທດເພື່ອນບ້ານແລ້ວປະເທດລາວແມ່ນຍັງເປັນເຂດທີ່ເປັນ ຊົນນະບົດທີ່ສຸດ ແລະ ມີປະຊາກອນອາໃສຢູ່ຊົນນະບົດຫຼາຍກວ່າໝູ່. ຜະລິດຕະພັນລວມຍອດພາຍໃນ (GDP) ຂອງສປປລາວ ແມ່ນມີອັດຕາການຂະຫຍາຍຕົວທີ່ແທ້ຈິງທີ່ 6.7% ເຊິ່ງຂະແໜງການຕົ້ນຕໍ ມີກະສິກຳ, ອຸດສາຫະກຳ ແລະການບໍລິການໂດຍມີ ອັດຕາການຂະຫຍາຍຕົວທີ່ແທ້ຈິງປະຈຳປີ 2015 ຄື 2%, 8%, ແລະ 8.5% ຕາມລຳດັບ. ຂະແໜງການ ກະສິກຳໄດ້ກວມເອົາ 27% ຂອງຜະລິດຕະພັນລວມຍອດພາຍໃນທັງໝົດຂອງສປປລາວ ເຊິ່ງມີປະຊາກອນ 2.3 ລ້ານຄົນຂອງປະຊາກອນທັງໝົດໄດ້ມີ ການປະກອບສ່ວນເຂົ້າໃນຂະແໜງການການກະສິກຳ ແລະຄິດໄລ່ເປັນ 70% ຂອງແຮງງານທັງໝົດເຊິ່ງໂດຍສ່ວນໃຫຍ່ແມ່ນຊາວ ກະສິກອນຂະໜາດນ້ອຍ. ເຖິງແມ່ນວ່າ ສປປລາວໄດ້ຮັບການພັດທະນາໃນຂະແໜງກຳສິກຳ ຂະຫຍາຍຕົວ 0.8% ໃນຊ່ວງປີ 2000-2012ເຊິ່ງຍັງໜ້ອຍກວ່າໝູ່ຖ້າທຽບໃສ່ປະເທດອື່ນໆ. ນອກຈາກນັ້ນ, ສປປລາວ ເປັນປະເທດໜຶ່ງທີ່ມີການບໍລິໂພກພືດຜັກ ປະລິມານທີ່ສູງ ເຊິ່ງສະເລ່ຍການບໍລິໂພກຜັກ ປະມານ 90 ກລ ຕໍ່ ຫົວຄົນ ຕໍ່ປີ.

ສປປລາວແມ່ນໄດ້ເຂົ້າເປັນສະມາຊິກ ຂອງກຸ່ມປະເທດອາຊີຕາເວັນອອກສ່ຽງໃຕ້ ຫຼື ອາຊຽນເຊິ່ງເປັນຜົນດີ ໃນການສົ່ງເສີມການ ພັດທະນາການຂະຫຍາຍຕົວຂອງຂະແໜງການຍ່ອຍ ແລະ ທັງເປັນການສ້າງພື້ນຖານໃນການພັດທະນາເສດຖະກິດໃນອະນາຄົດອີກ ດ້ວຍ. ນອກຈາກນັ້ນ ຄວາມປອດໄພຂອງອາຫານ ແລະ ຫຼັກໂພຊະນາການຍັງເປັນຂົງເຂດໜຶ່ງທີ່ຮຽກຮ້ອງໃຫ້ມີການເອົາໃຈໃສ່ຈາກ ລັດຖະບານ ແລະ ສິນຄ້າກະສິກຳອິນຊີຍັງເປັນທ່າແຮງຂອງລາວໃນຕະຫຼາດສົ່ງອອກໄດ້. ສະຫຼຸບລວມແລ້ວ ການສຶກສາດັ່ງກ່າວຈະ ສາມາດປະເມີນຄວາມສ່ຽງ ແລະ ຄວາມອ່ອນໄຫວທີ່ເກີດຈາກການເຂົ້າຮ່ວມຕົວ ຕະຫຼາດໄປສູ່ຕ່ອງໂສ້ມູນຄ່າເພີ່ມ ຂອງຊາວ ກະສິກອນຂະໜາດນ້ອຍໃນເມືອງຫາດຊາຍຟອງ ແລະ ຂໍ້ສະເໜີທາງດ້ານນະໂຍບາຍ ເພື່ອຊາວກະສິກອນຂະໜາດນ້ອຍ ໃນການ ເຂົ້າສູ່ລະບົບຕ່ອງໂສ່ຂອງຜັກອິນຊີແບບໃໝ່.

## ສະພາບການຜະລິດ ແລະການຕະຫຼາດ ຂອງຜັກອິນຊີ ຢູ່ ສປປລາວ

ຂະແໜງກະສິກຳ ແລະປ່າໄມ້ ເປັນບູລິມະສິດທີ່ສຳຄັນຂອງລັດຖະບານລາວ ໃນການບັນລຸຄວາມໝັ້ນຄົງດ້ານອາຫານແລະຍົກ ລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີ ຂຶ້ນ. ໂດຍສະເພາະ ການຜະລິດພືດຜັກແລະ ໝາກໄມ້ ແບບລະບົບອິນຊີ ແມ່ນມີທ່າແຮງ ແລະ ຄວາມໄດ້ປຽບຂອງ ສປປລາວ ເມື່ອ ປຽບທຽບກັບບັນດາປະເທດເພື່ອນບ້ານ ເຫັນວ່າປະເທດລາວ ເຣິ່ມີການນຳໃຊ້ຝຸ່ນເຄ ມີ ຂ້ອນຂ້າງໜ້ອຍໂດຍສະເລ່ຍແລ້ວແມ່ນມີ ການນຳໃຊ້ປຸ໋ຍເຄມີ ພຽງແຕ່ 12 ກິໂລຕໍ່ ເຮັກຕາ. ນອກຈາກນັ້ນ, ໃນເປັນພື້ນທີ່ຫ່າງ ໄກສອກຫຼີກແມ່ນບໍ່ມີການການໃຊ້ສານເຄມີ ເຂົ້າໃນການປູກຝັງເທື່ອ. ແຕ່ວ່າຍັງມີຂໍ້ຈຳກັດ ທີ່ມີການພົວພັນກັບການຜະລິດຜັກອິນຊີ ເປັນຕົ້ນ ການຕະຫຼາດ, ການສົ່ງອອກແລະ ຕ່ອງໂສ້ມູນຄ່າເພີ່ມຂອງຜັກອິນຊີແມ່ນ ມາ ຈາກ ປະລິມານ, ຄຸນນະພາບ ແລະຄວາມ ປອດໄພຂອງຜົນຜະລິດຜັກອິນຊີ ຂອງ ຊາວ ກະສິກອນຂະໜາດນ້ອຍ.



**ລະບົບຕ່ອງໂສ້ມູນຄ່າເພີ່ມຂອງຜັກອິນຊີໃນນະຄອນຫຼວງວຽງຈັນ** ໃນລະບົບຕ່ອງໂສ້ມູນຄ່າເພີ່ມຂອງຜັກອິນຊີນັ້ນ ສາມາດຈໍາແນກ ອອກເປັນ 3 ລະດັບ ຄື ການຜະລິດ, ຕະຫຼາດພາຍໃນ ແລະຕະຫຼາດຕ່າງປະເທດ. ຊາວກະສິກອນຂະໜາດນ້ອຍແມ່ນເປັນພາກສ່ວນຫຼັກໃນການດໍາເນີນການຜະລິດພ້ອມທັງຈໍາໜ່າຍໃຫ້ຜູ້ບໍລິໂພກທົ່ວໄປແລະບໍລິສັດສົ່ງອອກ. ໃນລະດັບທີສອງກໍຄືຕະຫຼາດພາຍໃນລວມມີຕະຫຼາດກະເສດອິນຊີ, ຕະຫຼາດສົດແລະຮ້ານສະດວກຊື້ເຊິ່ງແມ່ນກຸ່ມຊາວກະເສດອິນຊີເປັນຜູ້ບໍລິຫານຈັດການເອງ. ລະດັບທີສາມແມ່ນຕະຫຼາດຕ່າງປະເທດເຊິ່ງຄອບຄຸມທັງການນໍາເຂົ້າ ແລະສົ່ງອອກຜະລິດຕະພັນກະເສດອິນຊີເຊິ່ງມີບໍລິສັດສົ່ງອອກເປັນຜູ້ດໍາເນີນຫຼັກ. ເຖິງແມ່ນວ່າ ຜັກອິນຊີໄດ້ມີການຜະລິດຢູ່ພາຍໃນປະເທດແຕ່ກໍມີຈໍານວນໜຶ່ງແມ່ນຖືກນໍາເຂົ້າໂດຍກົງຈາກປະເທດໄທ.

## ບັນດາຂໍ້ຈໍາກັດທີ່ສໍາຄັນຕໍ່ຄວາມກ້າວໜ້າຂອງອຸດສາຫະກໍາຜັກອິນຊີ

***ຂໍ້ຈໍາກັດທີ່ຕິດພັນກັບການຜະລິດ***

- ການຂໍໃບຢັ້ງຢືນອິນຊີແມ່ນຈໍາເປັນຕ້ອງໃຊ້ເງິນທຶນຈໍານວນຫຼາຍແລະໃຊ້ເວລາດົນ ໃນການໄດ້ຮັບການອະນຸມັດອັນເນື່ອງຈາກການມີ ຫຼາຍຂໍ້ຈໍາກັດ ໃນລະດັບຂັ້ນເມືອງແລະແຂວງ ໃນການໃຫ້ຄໍາແນະນໍາ ແລະ ການປະກອບເອກະສານເພື່ອຂໍໃບຢັ້ງຢືນອິນຊີ.
- ສັດຕູພືດຈາກສິ່ງທີ່ມີຊີວິດ (ແມງໄມ້ ແລະພະຍາດ) ແລະ ສັດຕູພືດຈາກສິ່ງບໍ່ມີຊີວິດ (ຄວາມຜິດປົກກະຕິຂອງສະພາບອາກາດ ເນື່ອງຈາກການປ່ຽນແປງດິນຟ້າອາກາດ) ສົ່ງຜົນກະທົບຮ້າຍແຮງຕໍ່ ການຜະລິດຜັກອິນຊີ ແລະ ມີຜົນຕໍ່ການຕອບສະໜອງຜົນຜະລິດຜັກອິນຊີໃຫ້ຕະຫຼາດ ນອກຈາກນັ້ນ, ລະດູການກໍ່ສົ່ງຜົນກະທົບໃນການຕອບສະໜອງໃຫ້ຕະຫຼາດໄດ້ຄືການສະໜອງຜົນຜະລິດເກີນຄວາມຕ້ອງການໃນໄລຍະລະດູແລ້ງ ແລະຂາດແຄນໃນໄລຍະລະດູຝົນ.
- ຄວາມຫຍຸ້ງຍາກໃນການຂົນສົ່ງໃນຊ່ວງລະດູຝົນ (ພາກເໜືອແລະພາກຕາເວັນອອກຂອງລາວ)
- ຂາດການຈໍາແນກ ແລະ ການແບ່ງເຂດດິນປູກຜັກອິນຊີ ທີ່ບໍ່ຈະແຈ້ງ ມີຄວາມສ່ຽງ ທີ່ອາດສົ່ງຜົນກະທົບ ການປົນເປື້ອນຂອງຢາຂ້າສັດຕູພືດ.
- ຄວາມອຸດົມສົມບູນຂອງດິນຕໍ່າ, ມີຄວາມເປັນກົດສູງ (pH 3.5-4) ແລະມີອິນຊີວັດຖຸໃນດິນຂ້ອນຂ້າງຕໍ່າ ເຊິ່ງລັກສະນະເຫຼົ່ານີ້ ສາມາດ ພົບເຫັນໄດ້ທົ່ວໄປ ໃນສປປລາວ ປັດໃຈດັ່ງກ່າວ ເຮັດໃຫ້ມີຂໍ້ຫຍຸ້ງຍາກໃນການຜະລິດຜັກອິນຊີ.
- ແນວພັນຜັກທີ່ຊາວກະສິກອນ ນໍາໃຊ້ປູກແບບລະບົບອິນຊີນັ້ນ ແມ່ນຍັງບໍ່ທັນເໝາະສົມຕໍ່ກັບສະພາບການປ່ຽນແປງດິນຟ້າອາກາດ (ໄພແຫ້ງແລ້ງ, ໄພນໍ້າຖ້ວມ ແລະອຸນຫະພູມທີ່ສູງ) ແລະ ທົນທານຕໍ່ ພະຍາດ ແລະ ແມງໄມ້.
- ຜົນຜະລິດ ແລະ ຄຸນນະພາບຕໍ່າ ເນື່ອງຈາກຂໍ້ຈໍາກັດດ້ານຄວາມຮູ້ຄວາມທາງດ້ານເຕັກນິກຫຼັງການເກັບກ່ຽວ, ເຕັກໂນໂລຊີການປຸງແຕ່ງ-ຫຸ້ມຫໍ່, ແລະການຈັດການນໍ້າຂອງຊາວກະສິກອນຂະໜາດນ້ອຍ.
- ຕົ້ນທຶນໃນການຜະລິດຂ້ອນຂ້າງສູງ ເນື່ອງຈາກຄ່າແຮງງານ, ຄ່າຂົນສົ່ງ ແລະຫ້ອງເຢັນ ເຊິ່ງເຮັດໃຫ້ຜົນໄລຂອງຊາວກະສິກອນຫຼຸດລົງ.
- ບົດບາດຂອງເພດຍິງໃນການເຂົ້າຮ່ວມການຜະລິດພືດຜັກແບບອິນຊີ ຍັງຢູ່ລະດັບຕໍ່າ ເຊິ່ງເຮັດໃຫ້ເກີດຄວາມສ່ຽງ ທາງດ້ານການຕະຫຼາດ ແລະ ຜົນກໍາໄລທີ່ໄດ້ຈາກການຜະລິດ ເນື່ອງຈາກ, ໂດຍປົກກະຕິໃນສັງຄົມ ແລະ ວັດທະນາທໍາລາວເພດຍິງແມ່ນມີປະສົບການ ແລະ ສ່ວງຊານທາງດ້ານທາງການຕະຫຼາດ ເຊິ່ງຈະຊ່ອຍໃນການວາງແຜນໄລຍະເວລາໃນການປູກໃຫ້ໄດ້ຂາຍຜົນຜະລິດທີ່ລາຄາສູງ ແລະ ເປັນຊະນິດພືດຜັກທີ່ນິຍົມຂອງຕະຫຼາດ.

***ຂໍ້ຈໍາກັດທີ່ຕິດພັນກັບການຕະຫຼາດແລະລະບົບຕ່ອງໂສ້ມູນຄ່າເພີ່ມ***

- ຂາດພື້ນທີ່ທຸລະກິດຖາວອນເຮັດໃຫ້ການຜະລິດຜັກອິນຊີເພື່ອຂາຍມີຈໍາກັດ.
- ຍັງຂາດການໂຄສະນາແລະເຜີຍແຜ່ກ່ຽວກັບຜະລິດຕະພັນກະສິກໍາອິນຊີ ໂດຍສະເພາະ ຊະນິດພືດຜັກ ເຊິ່ງສົ່ງຜົນໃຫ້ຜູ້ບໍລິໂພກບໍ່ຮູ້ເຖິງວິທີການປຸງແຕ່ງ ແລະ ການນໍາມາບໍລິໂພກ ທີ່ມີຂາຍຢູ່ໃນທ້ອງຕະຫຼາດອິນຊີ.
- ການຕອບສະຫນອງຂອງຜະລິດຕະພັນທີ່ມີມູນຄ່າເພີ່ມແມ່ນບໍ່ພຽງພໍຕາມຄວາມຕ້ອງການ.
- ການຈໍາກັດຂອງຊ່ອງທາງການຈັດຈໍາໜ່າຍເນື່ອງຈາກອຸປະທານໜ້ອຍແລະມີມູນຄ່າເພີ່ມຕໍ່າ.

- ຂາດການປະສານງານລະຫວ່າງກະຊວງກະສິກຳແລະປ່າໄມ້ ແລະກຸ່ມກະສິກຳອິນຊີ ເຊິ່ງສົ່ງຜົນຕໍ່ຄວາມໝັ້ນໃຈຂອງຜູ້ບໍລິໂພກໃນທ້ອງຖິ່ນກ່ຽວກັບຫຼັກອະນາໄມແລະຄວາມປອດໄພຂອງຜົນຜະລິດຜັກອິນຊີພ້ອມທັງ ມີຜົນກະທົບຕໍ່ ການສົ່ງອອກອີກດ້ວຍ.
- ຂັ້ນຕອນບາງຢ່າງໃນການຢັ້ງຢືນຜະລິດຕະພັນກະສິກຳອິນຊີແມ່ນມີຄວາມຫຍຸ້ງຍາກແລະສິ່ງດັ່ງກ່າວຮຽກຮ້ອງໃຫ້ມີການປັບປຸງລະບົບຂັ້ນຕອນໃຫ້ມີຄວາມວອງໄວ ແລະ ງ່າຍຂຶ້ນ.
- ຂາດການສະໜັບສະໜຸນ ແລະໃຫ້ການຊີ້ນຳຈາກເຈົ້າໜ້າທີ່ໃນຂອບເຂດການເຂົ້າເຖິງຕະຫຼາດສົ່ງອອກ.

***ຂໍ້ຈຳກັດທີ່ຕິດພັນກັບການສົ່ງອອກ***

- ຄວາມຮູ້ກ່ຽວກັບການສົ່ງອອກແລະມາດຕະຖານຂອງສິນຄ້າກະສິກຳອິນຊີຍັງຈຳກັດ.
- ຊາວກະສິກອນຍັງຂາດຄວາມສາມາດໃນການເຊື່ອມຕໍ່ຜະລິດຕະພັນກະສິກຳອິນຊີ ກັບລະບົບຕ່ອງໂສ້ມູນຄ່າເພີ່ມຂອງຕະຫຼາດສົ່ງອອກເນື່ອງຈາກຄວາມອ່ອນໄຫວແລະຂາດການຮ່ວມມືກັນກັບຜູ້ສົ່ງອອກແລະຊາວກະສິກອນເອງ.

# ຂໍ້ສະເໜີແນະທາງນະໂຍບາຍ

## 1. ສົ່ງເສີມການຜະລິດຜັກອິນຊີຢ່າງເປັນລະບົບເຊື່ອມເຂົ້າກັນ

*ຂໍ້ສະເໜີແນະນະໂຍບາຍໃນໄລຍະສັ້ນ*

- ການແບ່ງເຂດ ຫຼືການຈັດສັນພື້ນທີ່ການຜະລິດສຳລັບຜັກອິນຊີ, ມີການຈຳແນກ ແລະ ແບ່ງເຂດການຜະລິດຜັກອິນຊີ ໃນລະດັບຂຸ່ມຊົນ, ລະດັບເມືອງ, ແລະ ລະດັບແຂວງ, ມີສຳຫຼວດ ແລະ ປະເມີນພື້ນທີ່ທີ່ເໝາະສົມ ແລະ ສາມາດໃຫ້ຜົນກຳໄລ ໃນການປູກຜັກອິນທີ່ ສາມາດ.
- ດຳເນີນນະໂຍບາຍການເກັບພາສີອາກອນທີ່ຕຳ່ ໃນພື້ນທີ່ດິນທີ່ມີການແບ່ງເຂດ (ເຂດພື້ນທີ່ສຳລັບການປູກຜັກອິນຊີ).
- ມີການກໍ່ຕັ້ງ ແລະ ສະໜັບສະໜູນ ໜ່ວຍບໍລິການ ທາງດ້ານ ວິຊາການ, ວັດສະດຸ, ສິ່ງທີ່ນຳໃຊ້ໃນການຕອບສະໜອງໃຫ້ຜູ້ຜະລິດຜັກອິນຊີ ໃນພື້ນທີ່ມີການແບ່ງເຂດ ແລະ ຈັດສັນສຳລັບການຜະລິດຜັກອິນຊີ.
- ມີການຄົ້ນຄວ້າ ແລະ ພັດທະນາແນວພັນໃໝ່ ທີ່ເໝາະສົມກັບລະບົບການຜະລິດແບບອິນຊີ ເຊິ່ງເປັນແນວພັນດັ່ງກ່າວຄວນເປັນແນວພັນທີ່ ສາມາດຈະເລີນເຕີບໂຕໄດ້ດີ ໃນສະພາບ ດິນທີ່ມີຄວາມອຸດົມສົມບູນຕໍ່າ, ມີຄວາມຕ້ານທານຕໍ່ພະຍາດ ແມງໄມ້, ແລະ ສາມາດທົນທານຕໍ່ສະພາບແວດລ້ອມທີ່ບໍ່ເໝາະສົມເປັນຕົ້ນ ຄວາມແຫ້ງແລ້ງ, ນໍ້າຖ້ວມ, ອາກາດຮ້ອນ ເປັນຕົ້ນ.
- ມີການຄົ້ນຄວ້າທາງດ້ານເຕັກນິກ ແລະ ມີການຖ່າຍທອດຄວາມຮູ້ກ່ຽວ ເພື່ອເພີ້ມປະສິດທິຜົນ, ຄຸນະພາບແລະຄວາມປອດໄພຂອງຜົນຜະລິດຜັກອິນຊີ.
- ມີການຄົ້ນຄວ້າ ພັດທະນາເຕັກນິກ, ການຈັດການ ແລະ ການຖ່າຍທອດທາງດ້ານເຕັກນິກການປູກຜັກອິນຊີ ໃນເງື່ອນໄຂສະພາບການປ່ຽນແປງດິນຟ້າອາກາດ ເປັນຕົ້ນ ໃນສະພາບຄວາມແຫ້ງແລ້ງ, ນໍ້າຖ້ວມ, ມີການເກີດລະບາດພະຍາດ ແລະ ແມງໄມ້ ທີ່ຮຸ່ນແຮງ ແລະ ຜິດປົກກະຕິ
- ສົ່ງເສີມການນຳໃຊ້ ລະບົບການປູກພືດຜັກທີ່ມີຄວາມຫຼາກຫຼາຍ ເພື່ອປັບຕົວຕໍ່ ສະພາບການປ່ຽນແປງດິນຟ້າອາກາດ
- ມີການຄົ້ນຄວ້າ ແລະ ພັດທະນາລະບົບ ການປູກຜັກອິນຊີ ທີ່ມີຕົ້ນທຶນການຜະລິດທີ່ຕໍ່າ ແລະ ສາມາດຖ່າຍທອດເຕັກນິກດັ່ງກ່າວໃຫ້ຊາວກະສິກອນຂະໜາດນ້ອຍ
- ມີການສະໜັບສະໜູນທາງດ້ານຫລຸດພາສີ ແລະ ອຸດໜູນສິງນຳເຂົ້າ ທີ່ນຳໃຊ້ໃນການຜະລິດຜັກອິນຊີ ເພື່ອຫຼຸດຕົ້ນທຶນການຜະລິດທີ່ສູງ.
- ສົ່ງເສີມການປຸງແຕ່ງຜະລິດຕະພັນສຳເລັດຮູບເຊັ່ນຜັກດອງ, ນໍ້າຜັກ ແລະອາຫານກະປ໋ອງທັງເປັນການຂະຫຍາຍຜະລິດຕະພັນກະສິກຳອິນຊີ ແລະ ສົ່ງເສີມເຕັກນິກຫຼັງການເກັບກ່ຽວ ເພື່ອເປັນການເພີ້ມມູນຄ່າຂອງຜົນຜະລິດ, ຮັກສາຄຸນນະພາບ, ແລະ ຄວາມປອດໄພຂອງຜົນຜະລິດ.

*ຂໍ້ສະເໜີສໍາລັບນະໂຍບາຍໃນໄລຍະຍາວ*

- ສະໜັບສະໜູນ ໃຫ້ສະຫະພັນແມ່ຍິງໃຫ້ມີບົດບາດ ແລະ ສ່ວນຮ່ວມຫຼາຍຂຶ້ນໃນການຜະລິດຜັກອິນຊີ ໂດຍສະເພາະແມ່ນຊາວກະສິກອນທີ່ເປັນໄວໜຸ່ມ ເພື່ອເພີ່ມການມີສ່ວນຮ່ວມຂອງແມ່ຍິງ ເຊິ່ງຈະຊ່ວຍໃນການຊ່ອງທາງດ້ານການຕະຫຼາດຂອງຜັກອິນຊີ.
- ສະໜັບສະໜູນ ແລະ ກໍ່ສ້າງໜ່ວຍບໍລິການທາງດ້ານເຕັກນິກ, ວັດສະດຸ ແລະ ສິ່ງນໍາເຂົ້າໃນການປູກຜັກອິນຊີ ເຊິ່ງ ເປັນໜ່ວຍບໍລິການທີ່ສາມາດຕອບສະໜອງ ໃຫ້ແກ່ຊາວກະສິກອນຂະໜາດນ້ອຍ
- ສົ່ງເສີມ ແລະ ພັດທະນາອຸດສາຫະກໍາແປຮູບ ເປັນຕົ້ນ ຜັກກະປ໋ອງ, ຜັກອິນຊີແຊ່ແຂງ ທີ່ສາມາດຊ່ວຍຊາວກະສິກອນ ຜູ້ຜະລິດຜັກອິນຊີ ມີຕະຫຼາດທີ່ແນ່ນອນ ນອກຈາກນັ້ນຍັງສາມາດເພີ່ມການສ້າງວຽກເຮັດງານທໍາຫຼາຍຂຶ້ນ.

**2. ລະບົບຕ່ອງໂສ້ມູນຄ່າເພີ່ມຈາກການຜະລິດຜັກອິນຊີໄປຫາຜູ້ບໍລິໂພກ**

*ຂໍ້ສະເໜີແນະນະໂຍບາຍໄລຍະສັ້ນ*

- ໃຫ້ມີການພັດທະນາການອອກແບບການຫຸ້ມຫໍ່ຜະລິດຕະພັນທີ່ສະແດງໃຫ້ເຫັນເຖິງຄຸນະພາບແລະຄວາມປອດໄພຂອງອາຫານເພື່ອຍົກລະດັບຄວາມເຊື່ອໝັ້ນຂອງຜູ້ບໍລິໂພກ.
- ກະຈາຍຕ່ອງໂສ້ຂອງຜູ້ສະໜອງທັງພາກສ່ວນທີ່ມີສ່ວນກ່ຽວຂ້ອງແລະອີງໃສ່ຄວາມຫຼາກຫຼາຍຂອງຜະລິດຕະພັນ. ຜູ້ເກັບຊື້ແລະຜູ້ຂາຍຍົກຂາຍຍ່ອຍຄວນມີການຮ່ວມມືກັນເພື່ອຂະຫຍາຍຊ່ອງທາງການແຈກຈ່າຍສິນຄ້າ.

**3. ການເຊື່ອມຕໍ່ກັນລະຫວ່າງຜູ້ບໍລິໂພກແລະສິນຄ້າ: ການປັບປຸງການຕະຫຼາດໃໝ່**

*ຂໍ້ສະເໜີແນະນະໂຍບາຍໃນໄລຍະສັ້ນ*

- ຄະນະກໍາມະການຂອງກຸ່ມກະສິກໍາອິນຊີຄວນຊອກວິທີທີ່ງ່າຍໃນການກວດສອບຄຸນນະພາບຂອງຜັກອິນຊີ. ນອກຈາກນັ້ນ, ມາດຕະຖານຄວາມປອດໄພຂອງອາຫານແມ່ນຄວນມີການເຜີຍແຜ່ໃຫ້ຜູ້ບໍລິໂພກຮັບຮູ້ແລະເຂົ້າໃຈ.
- ສະມາຊິກຂອງກຸ່ມກະສິກໍາອິນຊີຄວນມີການເຜີຍແຜ່ແລະໂຄສະນາກ່ຽວກັບກຸ່ມກະສິກໍາອິນຊີແລະຜະລິດຕະພັນຜ່ານຊ່ອງທາງຕ່າງໆເຊັ່ນໂທລະພາບ, ວິທະຍຸແລະຜ່ານ ສື່ມີເດຍເຊັ່ນ Facebook, Twitter ແລະ Instagram.
- ສ້າງລາຍການໂທລະພາບກ່ຽວກັບການເຮັດອາຫານທີ່ໃຊ້ຜັກອິນຊີ ເປັນສ່ວນປະກອບເພື່ອເຜີຍແຜ່ຂໍ້ມູນກ່ຽວກັບຜັກແລະສູດອາຫານໃໝ່ໆ ແລະເປັນການສ້າງຊ່ອງທາງຈໍາໜ່າຍໃຫ້ແກ່ຕະຫຼາດອີກດ້ວຍ.
- ສ້າງເຄືອຄ່າຍເຊັ່ນ ກຸ່ມຜູ້ບໍລິໂພກຜັກອິນຊີ, ກຸ່ມຜູ້ບໍລິໂພກອາຫານເພື່ອຮັກສາສຸຂະພາບ ແລະອາຫານທີ່ປອດໄພ, ຖືກຫຼັກອະນາໄມເພື່ອເປີດໂອກາດໃຫ້ຊາວກະສິກອນໄດ້ມີແນວຄິດໃໝ່ໆ ແລະແລກປ່ຽນຄວາມຄິດເຫັນເຊິ່ງກັນແລະກັນເພື່ອໃຫ້ໄດ້ຮັບຜົນປະໂຫຍດນໍາກັນ.
- ຈັດໃຫ້ມີການຫຸ້ມຫໍ່ ແລະຕິດລາຄາຕາມຄວາມເໝາະສົມເພື່ອສ້າງຄວາມສະດວກໃຫ້ແກ່ຜູ້ບໍລິໂພກ.
- ມີຜູ້ຊ່ຽວຊານດ້ານການຕະຫຼາດຈາກມະຫາວິທະຍາໄລແຫ່ງຊາດສາມາດໃຫ້ຄໍາແນະນໍາແກ່ຊາວກະສິກອນອິນຊີດ້ານການນໍາໃຊ້ຍຸດທະສາດທາງການຕະຫຼາດໃນການສ້າງຍອດຂາຍໃຫ້ເພີ່ມຂຶ້ນ.

*ຂໍ້ສະເໜີແນະນະໂຍບາຍໄລຍະຍາວ*

- ຢັ້ງຢືນຄຸນະພາບຂອງຜະລິດຕະພັນກະສິກໍາອິນຊີ ໂດຍການອອກໃບຢັ້ງຢືນໃຫ້ແກ່ສະມາຊິກກຸ່ມກະສິກໍາອິນຊີແລະໃຫ້ເຂົາເຈົ້າ ສາມາດສະແດງໃບຢັ້ງຢືນດັ່ງກ່າວຢູ່ຕະຫຼາດເຊິ່ງວ່າຂັ້ນຕອນຂອງການອອກໃບຢັ້ງຢືນອິນຊີ ແມ່ນຄວນໄດ້ຮັບການສະໜັບສະໜູນຈາກກະຊວງກະສິກໍາແລະປ່າໄມ້ຕັ້ງ ແຕ່ຂັ້ນເມືອງ ຫາ ຂັ້ນແຂວງ.
- ຄະນະກໍາມະການກຸ່ມກະສິກໍາອິນຊີ ຄວນມີການຮ່ວມມືກັບກະຊວງກະສິກໍາແລະປ່າໄມ້ໃນການຈັດຕັ້ງການປະຊຸມ, ການກວດສອບຄຸນນະພາບ ແລະຫຼັກອະນາໄມ ເປັນປະຈໍາ ແລະຄວນມີບົດລາຍງານໃຫ້ຜູ້ບໍລິໂພກໄດ້ຮັບຮູ້.
- ລັດຖະບານຄວນຈັດສັນສະຖານທີ່ທີ່ຕັ້ງຖາວອນໃຫ້ແກ່ຕະຫຼາດກະສິກໍາອິນຊີ ເພື່ອສ້າງຄວາມສະດວກສະບາຍທັງຊາວກະສິກອນ ແລະຜູ້ບໍລິໂພກ ໃນການເຂົ້າຫາສິນຄ້າອິນຊີແລະມີຄ່າໃຊ້ຈ່າຍທີ່ເໝາະສົມ.
- ຄະນະບໍລິຫານກຸ່ມກະສິກໍາອິນຊີ ຄວນປະກອບມີຜູ້ຊ່ຽວຊານທາງດ້ານການຕະຫຼາດ, ເຕັກໂນໂລຊີແລະການອອກແບບຜະລິດຕະພັນ.

**4. ສ້າງນະໂຍບາຍທາງການຄ້າ ເພື່ອເຊື່ອມໂຍງສິນຄ້າໄປສູ່ຕະຫຼາດໂລກ**

*ຂໍ້ສະເໜີແນະນະໂຍບາຍໄລຍະສັ້ນ*

- ການເຊື່ອມຕໍ່ຊາວກະສິກອນອິນຊີ ກັບຕະຫຼາດສົ່ງອອກແມ່ນເປັນສິ່ງທີ່ສຳຄັນສຳລັບກຸ່ມກະສິກຳອິນຊີ. ຕະຫຼາດສົ່ງອອກສາມາດເຜີຍແຜ່ໃຫ້ບັນດາປະເທດເພື່ອນບ້ານໃກ້ຄຽງໃຫ້ຮັບຮູ້ກ່ຽວກັບຜະລິດຕະພັນອິນຊີໂດຍສາມາດຜ່ານຂໍ້ຕົກລົງທາງການຄ້າລະຫວ່າງປະເທດ ເຊັ່ນສະມາຄົມອາຊຽນ, ສິດທິພິເສດທາງພາສີແບບທົ່ວໄປ (the Generalized System of Preferences (GSP)) ແລະການພົວພັນການຄ້າປົກກະຕິ (NTR) ເຊິ່ງສະມາຄົມສະຫະພາບເອີລົບ, ຍີ່ປຸ່ນແລະສະຫະລັດອາເມລິກາໄດ້ອະນຸຍາດໃຫ້ມີການນຳເຂົ້າຜັກອິນຊີໃນອັດຕາປອດພາສີຈາກສປປລາວ, ເຂດສິນຄ້າສາລີອາຊຽນແລະຜູ້ທີ່ເປັນສະມາຊິກອົງການການຄ້າໂລກ.

*ຂໍ້ສະເໜີແນະນະໂຍບາຍໄລຍະຍາວ*

- ມາດຕະຖານທາງດ້ານດ້ານຄຸນນະພາບແລະຄວາມປອດໄພຂອງການຜະລິດສິນຄ້າກະສິກຳອິນຊີໃນຕ່າງປະເທດແມ່ນຮຽກຮ້ອງໃຫ້ມີການແປເປັນພາສາລາວ ໃນດ້ານຂໍ້ມູນຕ່າງໆ ແລະມີການໝູນວຽນສິນຄ້າພາຍໃນຊາວກະສິກອນອິນຊີໃນທ້ອງຖິ່ນເພື່ອທີ່ຈະສາມາດປະຕິບັດຕາມເກນມາດຕະຖານແລະເຂົ້າຫາຕະຫຼາດຕ່າງປະເທດໄດ້.
- ກະຊວງກະສິກຳແລະປ່າໄມ້ ແລະກະຊວງອຸດສາຫະກຳແລະການຄ້າສາມາດ ຊ່ວຍໃຫ້ຜູ້ປະກອບການສົ່ງອອກໂດຍການເຮັດໃຫ້ຂັ້ນຕອນການສົ່ງອອກໄວຂຶ້ນ, ຫຼຸດຜ່ອນຄ່າໃຊ້ຈ່າຍໃນການນຳເຂົ້າສິນຄ້າໃນການຜະລິດແລະແປຮູບສິນຄ້າກະສິກຳອິນຊີພ້ອມທັງຊອກຫາຊ່ອງທາງໃນການເຂົ້າຫາຕະຫຼາດຕ່າງປະເທດ.

**5. ຍຸດທະສາດໃນການສະໜັບສະໜູນບັນດາຂໍ້ສະເໜີແນະຂ້າງເທິງ**

*ຂໍ້ສະເໜີແນະນະໂຍບາຍໄລຍະສັ້ນ*

- ສະໜັບສະໜູນແຫຼ່ງເງິນທຶນໃກ້ຊາວກະສິກອນຂະໜາດນ້ອຍກູ້ຢືມ ເພື່ອຕອບສະໜອງ ແລະຮອງຮັບຕົ້ນທຶນ, ຄ່າໃຊ້ຈ່າຍທີ່ສູງຂອງການຜະລິດຜັກອິນຊີ
- ຄວນມີການຈັດງານວາງສະແດງສິນຄ້າທັງຢູ່ທ້ອງຖິ່ນ ແລະຕ່າງປະເທດ ເຊັ່ນບັນດາກະຊວງຕ່າງໆ ສາມາດໃຫ້ໂອກາດໃນການນຳສະເໜີແລະຂາຍສິນຄ້າກະສິກຳອິນຊີໂດຍການຈັດງານວາງສະແດງ.

*ຂໍ້ສະເໜີແນະນະໂຍບາຍໄລຍະຍາວ*

- ພັດທະນາຄວາມອາດສາມາດຂອງຊາວກະສິກອນຂະໜາດນ້ອຍໃນການຊອກຫາຊ່ອງທາງ ທາງດ້ານກັບຕະຫຼາດ, ການຮັບມືກັບຄວາມສ່ຽງ, ການຂໍໃບຢັ້ງຢືນກະສິກຳອິນຊີ ແລະອື່ນໆ.
- ສະໜັບສະໜູນຜູ້ປະກອບການຂະໜາດນ້ອຍໃນການປະຕິບັດແລະປັບຕົວໃຫ້ມີຄວາມຢືດຢຸ່ນໃນຂະນະທີ່ພັດທະນາໄປພ້ອມໆກັນ.
- ຍົກບັນຫາການປ່ຽນແປງດິນຟ້າອາກາດ ເຂົ້າສູ່ນະໂຍບາຍ, ແຜນຍຸດທະສາດ, ແລະ ແຜນປະຕິບັດຂອງຂະແໜງກະສິກຳໂດຍຜ່ານການ ວາງແຜນ, ອອກແບບແຜນໃນການຈັດຕັ້ງປະຕິບັດ ແລະ ການການລົງທຶນໃນອະນາຄົດ.